ສຳນັກງານໃຫຍ່

ເລກທີ: 2813/ທຄຕລ.2024
ນະຄອນຫຼວງວຽງຈັນ, ວັນທີ: 15 AUG 2024

ໜັງສືແຈ້ງເຊີນ

ເຖິງ: ບັນດາ ບໍລິສັດພາກລັດ ແລະ ເອກະຊົນ ຢູ່ພາຍໃນ ສປປ ລາວ.

ເລື່ອງ: ເຊີນເຂົ້າຮ່ວມການປະມູນລາຄາ ຮັບເໝົາທ່ອງທ່ຽວ ວຽງຈັນ-ຊຽງໄຮ້-ຊູໂຈວ 05 ວັນ 04 ຄືນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາ ບໍລິສັດພາກລັດ ແລະ ເອກະຊົນ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນລາຄາ ຮັບເໝົາທ່ອງທ່ຽວ ວຽງຈັນ-ຊຽງໄຮ້-ຊູໂຈວ 05 ວັນ 04 ຄືນຕາມ ລາຍລະອຽດລຸ່ມນີ້:

ລ/ດ	ລາຍລະອຽດ	ຈຳນວນ ຄືນ	ໄລຍະການ ເດີນທາງ	ໝາຍເຫດ
1	- ໂຮງແຮມລະດັບ 4 ດາວ 2 ຄືນ/ຫ້ອງ, ຄ່າອາຫານ, ປີ້ຍົນໄປ-ກັບ ສາຍການບິນໄຊນາ ເອັດເຕີນ ທີ່ນັ່ງຊັ້ນ economy. - ອາຫານທຸກຄາບຕາມໂປຣແກມທົວ, ຄ່າວີຊ່າໄປຈີນ, ລົດນຳທ່ຽວ, ໄກ້ນຳທ່ຽວ, ຖົງຜ້າ, ຄ່າເຂົ້າຊົມສະຖານທີ່ທ່ອງທ່ຽວ. - ຄ່າປະກັນໄພ ແລະ ອາກອນ 10%.	18 ທ່ານ	23-27/10/2024	- **ເມືອງຊຽງໄຮ້:** ລ່ອງເຮືອຊົມເມືອງບູຮານຈູເຈียจຽວ, ວັດສົງຍອນ, ໂຮງງານໄຂ່ມຸກ, ຊ່ອບປິ້ງຢຸ່ຊິງໜິງ ຊຽວ, ຊົມວິວຫໍຄອຍໄຂ່ມຸກ, ຮ້ານຂາຍບົວຫິມະ. - **ຮ້ານຢາ,** ໂຮງງານຢົກ, ອຸໂມງເລເຊີ, ຊົມວິວຫາດໄຫວ້ທານ, ຖ່າຍຮູບຕຶກເຕັ້ນລະບຳ, ເຮືອນນ້ຳຊາ, ເມືອງຈຳລອງ ຖ່າຍທຳໜັງ, ຊອບປິ້ງຫ້າງດັງ. - **ເມືອງອູຊີ:** ວັດພະໃຫຍ່ຫຼົງ ຊານຕ້າຟໍ, ສາລາຟ່າງກົງ, ໂຮງງານຜ້າໄໝ, ເມືອງ ຈຳລອງອັງກົດ, ຍ່ານທ່ຽວ ຊິນຊຽນຕິ, ຊ່ອບປິ້ງ, ພິພິຕະ ພັນໄຂ່ມຸກ, ຊອບປິ້ງ.

- **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

ເອກະສານຊອງທີ 1 (ບໍ່ປິດຊອງ):

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດ ດຳເນີນທຸລະກິດຢ່າງໜ້ອຍ 2 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນ ຢ່າງໜ້ອຍ 2022 ແລະ ເອກະສານກ່ຽວກັບຜົນງານ ຜ່ານມາຂອງບໍລິສັດ.
2. ສາມາດຍື່ນເອກະສານຂ້າງເທິງໄດ້ ນັບຈາກວັນນີ້ຈົນເຖິງ ວັນພຸດ ວັນທີ 21/08/2024 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ Email: procurement@bcel.com.la ຫຼື ສົ່ງຊອງ ເອກະສານ ທີ່ຂາເຂົ້າຂາອອກ ທຄຕລ ຊັ້ນ 4 ຕຶກ C ສຳນັກງານໃຫຍ່ ທຄຕລ.

ເອກະສານຊອງທີ 2 (ປິດຊອງ):

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມໃນວັນຄານ, ທີ **27/08/2024 ເວລາ 09:00** ໂມງ ເຊິ່ງບັນດາບໍລິສັດຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ຕຶກ C ສຳນັກງານໃຫຍ່ ທຄຕລ.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນ **ສະກຸນເງິນກີບ ແລະ ໂດລາ** ໃຫ້ຄົບຖ້ວນ .
3. ບໍລິສັດຜູ້ສະໜອງຕ້ອງກຳນົດ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງ ຂອງ ທຄຕລ ໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ **10 %** ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ ອອກໂດຍທະນາຄານພາຍໃນ ສປປ ລາວ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງວັນທີ 30/09/2024)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳ ປະກັນດັ່ງກ່າວຄືນ.

ໝາຍເຫດ:

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການ ກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກ ລາຄາພຽງຢ່າງດຽວ).

V. ເງື່ອນໄຂການປະມູນສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງບໍລິສັດ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ພາຍຫຼັງເຊັນສັນຍາທັງ 2 ຝ່າຍສຳເລັດ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຮອງຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ໜູແສງທອງ ອານຸລັກຄຳ

ຕິດຕໍ່ພົວພັນ:
021 213200 ຕໍ່ 020 28 828 222 (ໂມງລັດຖະການ)